# ໜັງສື ໑ ເປໂຕ

ໃຈຄວາມສຳຄັນ: ຄວາມບໍລິສຸດ

ຈຳນວນບົດ: ໕ ບົດ

ວ່າດ້ວຍຜູ້ຂຽນ:

ຜູ້ຂຽນໜັງສືນີ້ແມ່ນທ່ານເປໂຕອັຄສາວົກຂອງພຣະເຢຊູ (໑:໑) ເພິ່ນທຳຕົນເປັນຜູ້ຮັບໃຊ້ແລະເປັນພະຍານຝ່າຍ ຄວາມທຸກລຳບາກຂອງອົງພຣະຄຣິດ (໕:໑) ຄວາມຈິງແລ້ວ ທ່ານເປໂຕກໍເປັນຜູ້ໃຫຍ່ຜູ້ສຳຄັນໃນທ່າມກາງພວກອັຄສາວົກຂອງພຣະອົງ ຊີວິດແຫ່ງການທຳງານຂອງທ່ານເປໂຕແບ່ງອອກເປັນສີ່ສໄມຄື:

໑. ໃນສໄມທີ່ພຣະເຢຊູຍັງບໍ່ຊົງເອີ້ນເອົາ
໒. ໃນສໄມທີ່ຊົງເອີ້ນເອົາເຖິງວັນເພັນເຕກອສເຕ
໓. ໃນສໄມວັນເພັນເຕກອສເຕເຖິງຄາວປະຊຸມຢູ່ກຸງເຢຣູຊາເລັມ
໔. ໃນສໄມຄາວປະຊຸມຢູ່ກຸງເຢຣູຊາເລັມເຖິງສິ້ນຊີວິດ

໑. ໃນສໄມທີ່ພຣະເຢຊູຍັງບໍ່ຊົງເອີ້ນເອົານັ້ນ ພວກເຮົາຮູ້ຈັກເພິ່ນແຕ່ພຽງວ່າ ເພິ່ນຊື່ຊີໂມນອາໄສຢູ່ທີ່ເບັດຊາຍປະດາແລະກາເປນາອຸມ ເພິ່ນເປັນຄົນຫາປາ (ມັດທາຍ ໔:໑໘) ແລະເຄີຍມີເມັຍແລ້ວ (ມາຣະໂກ ໑:໒໙–໓໐)

໒. ໃນສໄມທີ່ພຣະເຢຊູຊົງເອີ້ນແລ້ວ ໄດ້ມີຜູ້ຂຽນໄວ້ວ່າ ເພິ່ນໄດ້ພົບກັບພຣະເຢຊູຄັ້ງແຣກ ແລະພຣະເຢຊູຊົງປ່ຽນຊື່ໃໝ່ວ່າ ເປໂຕ

ຊຶ່ງແປວ່າ "ຫີນດານ" (ໂຢຮັນ ໑:໓໕–໔໒) ພຣະເຢຊູຈຶ່ງເອີ້ນເອົາເພິ່ນ ແລະເພິ່ນ ໄດ້ສຶກສາ ຮ່ຳຮຽນ ນຳພຣະເຢຊູ ປະມານ ສາມປີ ເພິ່ນເປັນຄົນດຸ ແລະມີໃຈກ້າຫານ ເປັນຄົນກ້າປາກກ້າເວົ້າ (ລູກາ ໕:໑–໑໑) ເພິ່ນເປັນສາວົກຄົນແຮກທີ່ຍອມຮັບວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າ (ມັດທາຍ ໑໖:໑໖) ແຕ່ກໍແມ່ນເພິ່ນນີ້ແຫລະທີ່ປະຕິເສດພຣະອົງເປັນຄັ້ງແຮກ (ມັດທາຍ ໒໖:໖໙–໗໕) ພາຍຫລັງທີ່ ພຣະເຢຊູສິ້ນພຣະຊົນ ໄປສາມວັນເພິ່ນກັບທ່ານໂຢຮັນໄດ້ເບິ່ງອຸໂມງບ່ອນຝັງສົບພຣະເຢຊູ ໝົດ (ໂຢຮັນ ໒໐:໑–໙) ເມື່ອພຣະເຢຊູຄືນພຣະຊົນມາຈາກຄວາມຕາຍ ພຣະອົງໄດ້ຊົງສັ່ງຄວາມໄວ້ນຳເພິ່ນ (ມາຣະໂກ ໑໖:໗) ພຣະເຢຊູຊົງປາກົດໃຫ້ເພິ່ນເຫັນ (ລູກາ ໒໔:໓໔; ໑ ໂກລິນໂທ ໑໕:໕) ພາຍຫລັງທີ່ພຣະເຢຊູໄດ້ສະເດັດຂຶ້ນໄປຟ້າສວັນແລ້ວ ທ່ານເປໂຕໄດ້ເປັນຜູ້ນຳພວກສາວົກ (ກິຈການ ໑:໑໕–໒໖)

໓. ໃນສໄມວັນເພັນເຕກອສເຕ ຊຶ່ງ ເປັນວັນ ເກີດ ແຫ່ງ ຄຣິສຕະຈັກນັ້ນ ຄຳ ສັນຍາ ແລະ ກິຈການແຫ່ງ ພຣະເຢຊູ ທີ່ພຣະອົງ ໄດ້ຊົງຝາກໄວ້ກັບທ່ານເປໂຕໄດ້ເຖິງທີ່ສຳເຣັດ (ໂຢຮັນ ໑:໔໒; ລູກາ ໒໔:໓໔; ມັດ-ທາຍ ໑໖:໑໙) ພຣະເຢຊູຊົງໃຊ້ທ່ານເປໂຕເປັນຜູ້ໄຂທາງແຜ່ນດິນຂອງພຣະເຈົ້າໃຫ້ແກ່ພວກຢູດາໃນວັນເພັນເຕກອສເຕ (ກິຈການ ໒) ແລະເປັນຜູ້ໄຂທາງໃຫ້ແກ່ພວກຕ່າງຊາດ ໃນຄາວເພິ່ນໄປຫາທ່ານ

ໂກເນລີໂອ (ກິຈການ ໑໐) ໃນໜັງສືກິຈການຕັ້ງແຕ່ບົດ ໑–໑໐ ໄດ້ຂຽນບອກວ່າທ່ານ ເປໂຕໄດ້ເປັນຄົນ ສຳຄັນກວ່າພວກ ສາວົກທັງ-ຫລາຍ.

໔. ໃນສໄມປະຊຸມຢູ່ກຸງເຢຣູຊາເລັມຈົນເຖິງລົມຊີວິດນັ້ນ ເຣື່ອງຂອງທ່ານເປໂຕໃນສໄມນີ້ໄດ້ຂຽນໄວ້ໃນຄາລາເຕັຍ ໑:໑໘; ໒:໗–໑໑; ໑ ໂກລິນໂທ ໑:໑໒; ໗:໕ ຕາມເຣື່ອງໃນປວັດສາດປາກົດວ່າທ່ານເປໂຕໄດ້ຖືກຄຶງໄວ້ເທິງໄມ້ກາງແຂນໃນຣະຫວ່າງປີ ຄ.ສ. ໖໗–໖໘ ທີ່ກຸງໂຣມ.

ອັນນຶ່ງພວກໂຣມັງຄາໂຕລິກເວົ້າວ່າ ທ່ານເປໂຕໄດ້ຢູ່ກຸງໂຣມ ໒໕ ປີນັ້ນ ຢ່າໄດ້ເຊື່ອແລະລັບເອົາເລີຍ ເພາະບໍ່ມີຂໍ້ພິສູດໃຫ້ເຫັນຈິງຕາມໄດ້ ແລະຍັງເວົ້າອີກວ່າ ທ່ານເປໂຕໄດ້ເປັນສັນຕະ–ປາປາ ຄວາມເວົ້ານີ້ກໍບໍ່ຈິງເຊັ່ນດຽວກັນ ເພາະຖ້າທ່ານເປໂຕໄດ້ເປັນສັນຕະປາປາຈິງແຕ່ ເປັນຫຍັງໃນໜັງສືກິຈການບົດ ໑໕ ຈຶ່ງເວົ້າວ່າທ່ານໄປໂລເປັນຄົນສຳຄັນ ແລະໃນໜັງສືຄາລາເຕັຍກໍເວົ້າວ່າ ທ່ານໄປໂລໄດ້ຕຳໜິທ່ານເປໂຕ ແລະເພິ່ນໄດ້ເຮັດຜິດ (໒:໒໑) ທ່ານເປໂຕໄດ້ນັບຖືທ່ານໄປໂລວ່າເປັນຄົນສຳຄັນ (໒ ເປໂຕ ໓:໑໕–໑໖)

## ວ່າດ້ວຍບູ້ຣັບໜັງສືນີ້:

ໜັງສືນີ້ທ່ານເປໂຕໄດ້ຂຽນ ໄປເຖິງຄຣິສຕຽນ ທີ່ພັດມາກຈາກກັນໄປ ໃນ ທະວີບ ອາເຊັຍ ຄືພວກ ຄຣິສຕຽນ ທີ່ມາຈາກພວກ ຕ່າງຊາດ

(໑:໑໔–໑໙; ໒:໑໐; ໓:໖; ໔:໓) ແລະໄດ້ຂຽນໄປເຖິງຄົນຊາດຢູດາ ດ້ວຍເພາະເພິ່ນໄດ້ອ້າງເຖິງພຣະຄັມພີເດີມໃຫ້ເຂົາຟັງ ດ້ວຍວ່າຄົນພວກນີ້ໄດ້ຮູ້ໄດ້ເຂົ້າໃຈພຣະຄັມພີເດີມແດ່ແລ້ວ (໑:໑໖; ໒:໖–໙; ໒ ເປໂຕ ໒:໑–໑໐)

ວ່າດ້ວຍເວລາທີ່ຂຽນ:

ພວກຄຣູສອນສ່ວນຫລາຍເຂົ້າໃຈວ່າ ໜັງສືນີ້ໄດ້ຂຽນໃນຣະຫວ່າງທີ່ພວກຄຣິສຕຽນຖືກຂົ່ມເຫັງຄືໃນປີ ຄ.ສ. ໖໔–໖໕ ແລະເພິ່ນໄດ້ສົ່ງໜັງສືນີ້ອອກຈາກເມືອງບາບີໂລນໄປນຳຊິລະວານ (໕:໑໒–໑໓)

ວ່າດ້ວຍຄວາມມຸ່ງໝາຍ:

ໃນຄາວນັ້ນພວກຄຣິສຕຽນຖືກກົດຂີ່ຂົ່ມເຫັງຢ່າງໜັກ ເພາະພວກພວກເຂົາເຫັນແກ່ພຣະນາມຂອງພຣະເຢຊູ ຄົນທັງຫລາຍຖືກພວກເຂົາວ່າເປັນຄົນຜູ້ທຳຊົ່ວ (໒:໑໒; ໓:໑໖) ພວກເຂົາຕົກຢູ່ໃນຄວາມຍາກລຳບາກທີ່ສຸດ (໑:໗;໔:໑໒–໑໓) ດ້ວຍເຫດນີ້ ທ່ານເປໂຕຈຶ່ງໄດ້ຂຽນໜັງສືນີ້ສົ່ງໄປຫາພວກເຂົາ ເພື່ອເລົ້າໂລມອຸ້ມຊູພວກເຂົາ ທ່ານເປໂຕໄດ້ເລົ້າໂລມພວກເຂົາວ່າ ຄົນຄຣິສຕຽນຈະຕ້ອງເປັນຜູ້ອົດທົນແລະມີໃຈໜັກແໜ້ນເພາະເຫັນແກ່ພຣະຄຣິດ ດ້ວຍວ່າອົງພຣະຄຣິດເອງກໍຊົງມີຄວາມທຸກລຳບາກແລະຊົງເປັນແບບຢ່າງໃຫ້ແກ່ພວກເຮົາ ບົດ ໒:໒໐–໒໑; ໔:໑໒–໑໔

## ວ່າດ້ວຍເນື້ອຄວາມ:

ໜັງສືນີ້ໄດ້ຖືວ່າສຳຄັນຫລາຍ ເພາະຜູ້ຂຽນເຄີຍຢູ່ໃກ້ຊິດແລະ ສນິດສນົມກັບພຣະເຢຊູມາແລ້ວ ພ້ອມທັງເປັນຜູ້ເຄີຍໄດ້ເຫັນພຣະຣັສມີ ແລະໄດ້ເຫັນຄວາມທຸກລຳບາກຂອງພຣະອົງມາແລ້ວດ້ວຍ ໒ ເປໂຕ ໑:໑໖

## ວ່າດ້ວຍຄຳສອນຕ່າງໆ

ກ. ສອນວ່າ ພຣະເຢຊູຊົງຖືກໂທດກໍເພື່ອຮັບເອົາບາບຂອງພວກເຮົາ ບົດ ໑:໑໑–໑໙; ໒:໒໑–໒໔ ໓:໑໘; ໔:໑໓

ຂ. ຄຳສອນກ່ຽວກັບການຄືນມາຈາກຕາຍຂອງພຣະອົງ ບົດ ໑:໓; ໓:໑໘,໒໑

ຄ. ຄຳສອນກ່ຽວກັບການ ສະເດັດມາ ຄັ້ງທີສອງຂອງ ພຣະເຢຊູ ບົດ ໑:໕–໗; ໓:໒໒;໔:໕,໑໓; ໕:໔

ງ. ຄຳສອນກ່ຽວກັບການເກີດໃໝ່ ບົດ ໑:໑໘–໒໕; ໒:໒

ຈ. ຄຳສອນກ່ຽວກັບຄຣິສຕະຈັກ ບົດ ໒:໔–໑໐

ສ. ສອນວ່າເມື່ອວັນຕັດສິນນັ້ນ ຈະຊົງຕັດສິນພວກຄົນທີ່ເຊື່ອດ້ວຍ ບົດ ໔:໕,໑໗–໑໘

## ວ່າດ້ວຍສິ່ງປະເສີດສີ່ຢ່າງຂອງທ່ານເປໂຕ

໑. ການທົດລອງຄວາມເຊື່ອ ບົດ ໑:໗

໒. ໂລຫິດປະເສີດຂອງອົງພຣະຄຣິດ ບົດ ໑:໑໙

໓. ຫີນອັນມີຊີວິດ ບົດ ໒:໔

໔. ຄຳປະຕິຍານຕົນ (໒ ເປໂຕ ໑:໔)

## ວ່າດ້ວຍຄຳປະຕິຍານ:

໑. ມໍຣະດົກທີ່ບໍ່ຮູ້ເປື່ອຍເນົ່າ ບົດ ໑:໔

໒. ຣັດສມີທາສິ່ງປຽບທຽບບໍ່ໄດ້ ບົດ ໑:໗

໓. ຄວາມລອດພົ້ນເປັນຜົນແຫ່ງຄວາມເຊື່ອ ບົດ ໑:໙-໑໐

໔. ພຣະຄຸນເມື່ອພຣະອົງສະເດັດກັບມາ ບົດ ໑:໑໓

໕. ການນັບຖືກຽດຕິຍົດ ບົດ ໒:໗

໖. ຄວາມສນຸກໃນປັ່ຈຸບັນ ບົດ ໓:໑໐

໗. ຄວາມຊື່ນຊົມຍິນດີຢ່າງທີ່ສຸດ ບົດ ໔:໑໓

໘. ມົງກຸດທີ່ບໍ່ຫ່ຽວແຫ້ງ ບົດ ໕:໔

## ວ່າດ້ວຍເນື້ອຄວາມກ່ຽວກັບພຣະຄຣິດ

໑. ລູກແກະທີ່ປາສຈາກຕຳໜິແລະຈຸດດ່າງພ້ອຍ ບົດ ໑:໑໙

໒. ຜູ້ບໍ່ໄດ້ກະທຳບາບແລະບໍ່ໄດ້ກ່າວຄຳເທັດ ບົດ ໒:໒໒–໒໔

໓. ຜູ້ຊອບທັມ ບົດ ໓:໑໘

໔. ຊົງປ່າວປະກາດແກ່ວິນຍານທີ່ຢູ່ໃນຄຸກ ບົດ ໓:໑໙

໕. ຊົງທົນທຸກທໍຣະມານແລະຊົງເປັນແບບຢ່າງ
ແກ່ພວກເຮົາ ບົດ ໒:໒໑

໖. ເປັນຫີນທີ່ມີຊີວິດແລະເປັນຫີນຫົວແຈ ບົດ ໒:໔,໖

໗. ພຣະຜູ້ລ້ຽງທີ່ຍິ່ງໃຫຍ່ ບົດ ໕:໔

## ວ່າດ້ວຍຄົນທີ່ເຊື່ອ

໑. ເມື່ອກ່ອນເປັນເໝືອນຝູງແກະທີ່ແຕກກະຈັດ
ກະຈາຍໄປ ບົດ ໒:໒໕

໒. ເປັນຜູ້ທີ່ຊົງເລືອກໄວ້ ບົດ ໑:໑

໓. ເປັນຫີນທີ່ມີຊີວິດ ບົດ ໒:໔

໔. ເປັນເດັກນ້ອຍທີ່ເກີດໃໝ່ ບົດ ໒:໑–໒

໕. ເປັນແຂກເມືອງແລະຄົນເດີນທາງ ບົດ ໒:໑໑

໖. ເປັນຜູ້ຊື່ນຊົມຍິນດີໃນຄວາມທຸກລຳບາກ ບົດ ໔:໑໓

໗. ເປັນຜູ້ທີ່ຊື່ວ່າຄົນຄຣິສຕຽນ ບົດ ໔:໑໖

## ການແບ່ງເປັນພາກ

## ຄຳນຳ ບົດ ໑:໑–໒

## ພາກທີ ໑ ວ່າດ້ວຍຄວາມພົ້ນ ບົດ ໑:໓–໒:໑໐

໑. ຄວາມພົ້ນຄືຄວາມຫວັງໃນອານາຄົດ ບົດ ໑:໓–໕

໒. ຄວາມພົ້ນຄືຄວາມຍິນດີໃນປັດຈຸບັນ ບົດ ໑:໖–໙

໓. ຄວາມພົ້ນເປັນສິ່ງທີ່ສແວງຫາໃນອານາຄົດ ບົດ ໑:໑໐–໑໒

໔. ໜ້າທີ່ສ່ວນຕົວ – ໃຫ້ນ້ອມຟັງແລະມີໃຈບໍຣິສຸດ ບົດ ໑:໑໓–໒໑

໕. ໜ້າທີ່ກ່ຽວກັບຜູ້ອື່ນ ບົດ ໑:໒໒–໒໕

໖. ແຜນການເພື່ອເຮັດໃຫ້ຈະເຣີນຂຶ້ນໃນພຣະເຢຊູ ບົດ ໒:໑–໑໐

## ພາກທີ ໒ ວ່າດ້ວຍຄວາມປະພຶດຂອງຄົນຄຣິສຕຽນ

ບົດ ໒:໑໑–໓:໑໒


໑. ຢູ່ໃຕ້ອຳນາດຜູ້ປົກຄອງ — ບົດ ໒:໑໓–໑໗

໒. ຢູ່ໃຕ້ອຳນາດນາຍຂອງຕົນ — ບົດ ໒:໑໘–໒໕

໓. ຢູ່ໃຕ້ອຳນາດຄອບຄົວ — ບົດ ໓:໑–໗


## ພາກທີ ໓ ວ່າດ້ວຍຣະບຽບວິໄນຂອງຄົນຄຣິສຕຽນ

ບົດ ໓:໘–໕:໑໑


໑. ຣະບຽບວິໄນໃນໂລກນີ້ — ບົດ ໓:໘–໔:໖

ກ. ຈະຕ້ອງເຮັດຢ່າງໃດແດ່ — ບົດ ໓:໘–໑໗

ຂ. ຜູ້ເປັນແບບຢ່າງຂອງເຮົາ — ບົດ ໓:໑໘–໒໒

ຄ. ຜູ້ເປັນເປົ້າໝາຍຂອງເຮົາ — ບົດ ໔:໑–໖

໒. ຣະບຽບວິໄນໃນຄຣິສຕະຈັກ — ບົດ ໔:໗–໕:໗

ກ. ໃຫ້ຮັກແພງຊຶ່ງກັນແລະກັນ — ບົດ ໔:໗–໑໑

ຂ. ຄວາມທຸກລຳບາກມາໃຫ້ຊົມຊື່ນຍິນດີ — ບົດ ໔:໑໒–໑໙

ຄ. ພວກເຖົ້າແກ່ຕ້ອງມີໃຈສັດຊື່ — ບົດ ໕:໑–໗

໓. ຣະບຽບວິໄນພາຍໃນພວກສັດຕູ — ບົດ ໕:໘–໑໑

ກ. ຜູ້ເປັນສັດຕູ — ບົດ ໕:໘

ຂ. ການເອົາຊະນະສັດຕູ — ບົດ ໕:໙

ຄ. ໄຊຊະນະແລະຄຳສຸດທ້າຍ — ບົດ ໕:໑໐–໑໔